CHANHTHAHONG et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 142-152.

# ສຶກສາຜົນການຈັດກິດຈະກຳການຮຽນ - ການສອນ ວິຊາພາສາລາວ ເລື່ອງ " ການແປງອັກສອນ ແລະ ແປງຄຳ " ໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບນັກສຶກສາ ຊັ້ນ ປີ 3 ສາຂາຄູພາສາລາວ - ວັນນະຄະດີ ສົກສຶກສາ 2020 - 2021

**ຄຳຊາຍ ຈັນທະທິງ [1] , ສັງຄົມ ສີສຸພັນ, ສົມຫວັງ ລົດທະວົງ, ສົມໃຈ ວຽງແກ້ວບົວຄຳ, ວຽງອານຸສຸກ ອິນທະວົງ, ພັນທະມະນັດ ປະທຸມວັນ ແລະ ໄມພອນ ອິນວັນຄຳ**

*ພາກວິຊາຄູພາສາ ຄະນະສຶກສາສາດ ມະຫາວິທະຍາໄລ ສຸພານຸວົງ*

[1]*ຕິດຕໍ່ພົວພັນ: ຄຳຊາຍ ຈັນທະທິງ, ພາກວິຊາຄູພາສາຄະນະສຶກສາສາດ, ມະຫາວິທະຍາໄລສຸພານຸວົງ, ເບີໂທ: +856 20 2863 4345, E-mail: khamxayedu9@gmail.com*

***ຂໍ້ມູນບົດຄວາມ:***
*ວັນທີສະໜັກ: 20 ພຶດສະພາ 2021*
*ປັບປຸງສຳເລັດ: 06 ມິຖຸນາ 2021*
*ຕອບ-ຮັບ: 19 ມິຖຸນາ 2021*

**ບົດຄັດຫຍໍ້**

ການຄົ້ນຄວ້າຄັ້ງນີ້ເປັນການສຶກສາຜົນການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ Team Assisted Individualization (TAI) ສຳລັບຜູ້ຮຽນຊັ້ນປີ 3 ທີ່ສາຂາວິຊາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2020 - 2021 ມີຈຸດປະ ສົງເພື່ອ: 1). ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການຈັດກິດຈະກຳການສອນວິຊາພາສາລາວເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບນັກສຶກສາຊັ້ນປີ 3; 2). ເພື່ອສຶກສາລະດັບຄວາມເພິ່ງພໍໃຈຂອງນັກສຶກສາຕໍ່ການຈັດກິດຈະກຳການສອນວິຊາພາສາລາວເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI. ກຸ່ມເປົ້າໝາຍທີ່ນຳມາຄືນັກສຶກສາຊັ້ນປີ 3 ສາຂາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ໃນພາກຮຽນທີ I ສົກຮຽນ 2020 - 2021 ມີຈຳນວນ 16 ຄົນ, ຍິງ 8 ຄົນ. ເຄື່ອງມືທີ່ໃຊ້ປະກອບດ້ວຍ: 1) ແຜນການສອນ 3 ແຜນໃຊ້ເວລາ 6 ຊົ່ວໂມງ, 2) ແບບທົດສອບກ່ອນ ແລະ ຫຼັງການຈັດກິດຈະກຳ, 3) ແບບສອບຖາມຄວາມເພິ່ງພໍໃຈຂອງຜູ້ຮຽນ ເຊິ່ງວິເຄາະຂໍ້ມູນໂດຍການຄຳນວນຫາຄ່າສະເລ່ຍ, ຄ່າຜັນປ່ຽນມາດຕະຖານ, ທົດສອບສົມມຸດຖານດ້ວຍແບບ paired sample t - test.

ຜົນການຄົ້ນຄວ້າພົບວ່າ: 1) ນັກສຶກສາທີ່ໄດ້ຮ່ວມກິດຈະກຳການຮຽນ - ການສອນ ໂດຍນຳໃຊ້ເທັກນິກການສອນແບບ TAI ພົບວ່າ: ຜົນການຮຽນກ່ອນ ແລະ ຫຼັງການສອນ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI ແມ່ນມີຄວາມແຕກຕ່າງກັນຢ່າງມີຄວາມສຳຄັນທາງສະຖິຕິທີ່ລະດັບ 0.00 % ໂດຍມີຄ່າສະເລ່ຍຜົນການຮຽນຫຼັງການຈັດກິດຈະກຳ ເທົ່າກັບ ($\bar{X} = 18.19 \; S.D = 1.72$) ສູງກວ່າຜົນກ່ອນການຈັດກິດຈະກຳ ເທົ່າກັບ ($\bar{X} = 15.38 \; S.D = 2.27$). ສະຫຼຸບໄດ້ວ່າຜົນການຮຽນຫຼັງການຈັດກິດຈະກຳສູງກວ່າ ຜົນການຮຽນກ່ອນການຈັດກິດຈະກຳ ສະຫຼຸບ ເຫັນວ່າກິດຈະກຳຮຽນຮູ້ໂດຍນຳໃຊ້ເທັກນິກການສອນແບບ TAI ນີ້ແມ່ນມີປະສິດທິຜົນສູງ ທັງໄດ້ຮັບການຕອບຮັບຈາກນັກສຶກສາເປັນຢ່າງດີ.

**ຄຳສັບສຳຄັນ:**

*ຜົນການຈັດກິດຈະກຳ, ຄວາມເພິ່ງພໍໃຈ, ການແປງອັກສອນ ແລະ ແປງຄຳ, ເທັກນິກການສອນ TAI*

CHANHTHAHONG et al. (2021). Souphanouvong Journal of Multidisciplinary Research and Development
ISSN 2521-0653. Volume 7. Issue 1. Jan – Jun 2021. Page 142-152.

# Achievement of teaching - learning activity in Lao language subject "editing alphabet and words" by using TAI technique for 3rd year students of Lao language and Literature program academic year 2020 - 2021

**Khamxay CHANHTHAHONG [1], Sangkhom SYSOUPHANH, Somvang LITTHAVONG, Somchay VIENGKEOBOUKHAM, Vienganousouk INTHAVONG, Phanthamanath PHATHOUMVANH, Maiphone INVANKHAM**

*Department of Language pedagogy, Faculty of Education, Souphanouvong University, Lao PDR*

***[1] Corresponding Authors:***
*khamxay CHANHTHAHONG, Department of Language pedagogy, Faculty of Education, Souphanouvong University,*
*Tel: +856 20 2863 4345, E-mail: khamxayedu9@gmail.com*

***Article Info:***
*Submitted: My 20, 2021*
*Revised: Jun 6, 2021*
*Accepted: Jun 19, 2021*

**ABSTRACT**

This research was intended to study the effectiveness of teaching and learning the Lao language by using the TAI technique to edit the alphabet and words of 3rd-year student in the program of Lao Language and Literature, Faculty of education, the academic year 2020 - 2021. The aims of this research were: 1) To compare the achievement in learning the Lao language after conducted teaching and learning by using the TAI technique to edit the alphabet and words for students in year 3; 2). To study the students' satisfaction in conducting teaching and learning the Lao language by using TAI technique. The target group of this study were 3rd-year students of the Lao Language and Literature program, Faculty of education, Souphanouvong University, in the first semester of 2020 – 2021 with the total number of the research samples were 16 students (8 women). The research instrument consists of three components; 1) teaching plans, 2) achievement tests before and after using TAI technique, 3) a questionnaire of student satisfaction. The data were analyzed by using descriptive statistics in the SPSS program to find out the standard deviation and paired sample t-test.

The result of this research found that: 1) the students' achievement before and after using the TAI technique in teaching-learning activity were different with the significance of statistic value 0.00%, with descriptive statistic after using the TAI technique ($\overline{X} = 18.19 \quad S.D = 1.72$) higher than before using TAI technique ($\overline{X} = 15.38 \; S.D = 2.27$), with 95% confidence level of hypothesis testing. 2) The students were most satisfied in the teaching-learning activities ($\overline{X} = 4.55$, $S.D = 0.61$).The result shows that students were satisfied and the teaching-learning activities using the TAI technique were highly effective.

**Keywords:** *The achievement of conducting activity, Satisfaction, Editing alphabet and words, TAI technique*

## 1. ພາກສະເໜີ

ສະພາບການສຶກສາຢູ່ປະເທດເຮົາໃນໄລຍະຜ່ານມາຄື ນັບແຕ່ປະເທດຊາດໄດ້ຮັບການປົດປ່ອຍຈົນເຖິງປັດຈຸບັນ. ໃນນັ້ນ, ກໍຖືວ່າສະພາບການສຶກສາຢູ່ປະເທດເຮົາໄດ້ຮັບການພັດທະນາຢ່າງວ່ອງໄວ, ມີການຂະຫຍາຍ ຕົວບໍ່ຢຸດຢັ້ງ ແລະ ມີປະສິດທິພາບດີຂຶ້ນເທື່ອລະກ້າວເຊິ່ງມັນໄດ້ສະແດງອອກຢູ່ບ່ອນວ່າ: ລະບົບການສຶກສາແຫ່ງຊາດໄດ້ຮັບການເສີມຂະຫຍາຍໃຫ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນະພາບແຕ່ອານຸບານຈົນຮອດມະຫາວິທະຍາໄລ, ໄດ້ສິ່ງເສີມວຽກງານການສຶກສາໃຫ້ເປັນຂອງປວງຊົນ, ມາຮອດປັດຈຸບັນສັງຄົມໄດ້ເອົາໃຈໃສ່ປະກອບທຶນຮອນເພື່ອພັດທະນາຄຸນະພາບການສຶກສາໃຫ້ມີການປັບປຸງດີຂຶ້ນ

ເປັນກ້າວໆ.

ການສິດສອນ ເປັນໜຶ່ງໃນປັດໄຈໃນການສົ່ງເສີມໃຫ້ມີລະດັບການສຶກສາ, ມີຄວາມຮູ້ກວ້າງຂວາງເຊິ່ງໃນສັງຄົມໜຶ່ງໆແມ່ນຈຳເປັນຕ້ອງມີການສິດສອນເປັນປັດໄຈພື້ນຖານຂອງການພັດທະນາເວົ້າລວມເວົ້າສະເພາະ ກໍຄືປະເທດລາວເຮົາແມ່ນປະເທດທີ່ກຳລັງສຸມໃສ່ພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ. ດັ່ງນັ້ນ, ວຽກການສຶກສາຈຶ່ງມີບົດບາດຄວາມສຳຄັນຫຼາຍຕໍ່ກັບສັງຄົມໂດຍສະເພາະການພັດທະນາຊັບພະຍາກອນມະນຸດໄດ້ອີງ ໃສ່ວຽກງານການສຶກສາເປັນຫຼັກ ແລະ ປັດຈຸບັນສັງຄົມກໍ່ໄດ້ເນັ້ນໃຫ້ການສຶກສາໄດ້ຂະຫຍາຍຕົວ, ມີປະລິມານ, ມີຄຸ ນະພາບທີ່ດີທຽບເທົ່າກັບສັງຄົມໃນອາຊ່ຽນກໍຄືຈຸດປະສົງຂອງພັກລັດວາງອອກໂດຍໜ່ວຍງານທີ່ກ່ຽວຂ້ອງທາງການສຶກສາຂອງລາວໄດ້ມີຄວາມພະຍາຍາມທີ່ຈະສົ່ງເສີມສະໜັບສະໜູນໃຫ້ຄູ - ອາຈານຈັດການຮຽນ - ການສອນທີ່ເນັ້ນໃສ່ຜູ້ຮຽນເປັນໃຈກາງ. ເນື່ອງຈາກວ່າໃນໄລຍະຜ່ານມາການຈັດການຮຽນ - ການສອນຂອງຄູສ່ວນຫຼາຍແມ່ນໄດ້ນຳເອົາວິທີສອນແບບເອົາຄູເປັນໃຈກາງໃນການສົ່ງຄວາມຮູ້, ຄູເປັນຜູ້ບັນຍາຍພຽງຝ່າຍດຽວ ເຊິ່ງຜູ້ຮຽນບໍ່ໄດ້ມີສ່ວນຮ່ວມໃນການຮຽນ - ການສອນເທົ່າທີ່ຄວນ ຜູ້ຮຽນທຸກຄົນມີຄວາມສາມາດຮຽນຮູ້ ແລະ ພັດທະນາຕົນເອງໄດ້ຖືວ່າຜູ້ຮຽນມີຄວາມສຳຄັນທີ່ສຸດ. ສະນັ້ນ, ຜູ້ສອນຈຶ່ງຕ້ອງປ່ຽນ ແປງບົດບາດຈາກຄວາມເປັນຜູ້ຊີ້ນຳ, ຜູ້ຖ່າຍທອດຄວາມຮູ້ໄປເປັນຜູ້ຊ່ວຍເຫຼືອສົ່ງເສີມ ແລະ ສະໜັບສະໜູນຜູ້ຮຽນໃນການສະແຫວງຫາຄວາມຮູ້ຈາກສື່ ແລະ ແຫຼ່ງການຮຽນຮູ້ຕ່າງໆໂດຍມຸ່ງພັດທະນາຜູ້ຮຽນໃຫ້ມີຄຸນະພາບຕາມມາດຕະຖານການຮຽນຮູ້ຄືຄວາມສາມາດໃນການສື່ສານ, ຄວາມສາມາດໃນການຄິດ, ຄວາມສາມາດໃນການແກ້ບັນ ຫາ, ຄວາມສາມາດໃນການໃຊ້ທັກສະ ແລະ ຄວາມສາມາດໃນການໃຊ້ເຕັກໂນໂລຊີ. ຜູ້ຮຽນຕ້ອງອາໄສຂະບວນການຮຽນຮູ້ທີ່ຫຼາກຫຼາຍເປັນເຄື່ອງມືທີ່ຈະນຳພາຕົນເອງໄປສູ່ເປົ້າໝາຍຂອງຫຼັກສູດໂດຍມີຂະບວນການຮຽນຮູ້ທີ່ຈຳເປັນສຳລັບຜູ້ຮຽນເປັນຕົ້ນແມ່ນ: ຂະບວນການຮຽນຮູ້ແບບບູລະນາການ, ຂະບວນການສ້າງຄວາມຮູ້, ຂະບວນການຄິດ, ຂະ ບວນການທາງສັງຄົມ, ຂະບວນການພົບພໍ້ສະຖານະການ ແລະ ແກ້ບັນຫາ, ຂະບວນການຮຽນຮູ້ຈາກປະສົບການຈິງ, ຂະບວນການປະຕິບັດ, ຂະບວນການຈັດການ, ຂະບວນການວິໄຈ, ຂະບວນການຮຽນຮູ້ຂອງຕົນເອງເປັນຕົ້ນ. ເຊິ່ງຂະບວນການເຫຼົ່ານີ້ເປັນແນວທາງໃນການຈັດການຮຽນຮູ້ທີ່ຜູ້ຮຽນຄວນໄດ້ຮັບການເຝິກຝົນຫຼໍ່ຫຼອມ, ພັດທະນາເພາະຈະສາມາດຊ່ວຍໃຫ້ຜູ້ຮຽນເກີດການຮຽນຮູ້ໄດ້ດີ. ເພື່ອເປັນການປັບປຸງການສຶກສາໃຫ້ມີການພັດທະນາທີ່ດີຂຶ້ນກວ່າເກົ່າພັກ ແລະ ລັດຖະບານກໍຄືກະຊວງສຶກສາທິການ ແລະ ກິລາໄດ້ມີແນວທາງການສຶກສາໂດຍສະເພາະແມ່ນຕ້ອງແນໃສ່ການຮຽນ - ການສອນ ຄູຕ້ອງໝູນໃຊ້ວິທີສິດສອນຫຼາຍຮູບແບບເພື່ອພັດທະນາການຮຽນ - ການສອນໃຫ້ມີບັນຍາ ກາດ, ຜູ້ຮຽນມີສ່ວນຮ່ວມໃນການຮຽນໃຫ້ຫຼາຍຂຶ້ນ. ຈາກວິ ວັດທະນາການແຫ່ງການປ່ຽນແປງຜູ້ຮຽນທີ່ມີຄວາມແຕກຕ່າງກັນເຮັດໃຫ້ເກີດບັນຫາໃນການເລືອກວິທີສິດສອນຂອງຄູ. ນອກຈາກນັ້ນ, ຜູ້ຮຽນທີ່ຮຽນອ່ອນຈະຖືກຄົນອື່ນເບິ່ງຂ້າມຄວາມສຳຄັນຈາກໝູ່ເພື່ອນໃນຫ້ອງ. ດັ່ງນັ້ນ, ເພື່ອເປັນການແກ້ບັນຫາຕ່າງໆຈຶ່ງເລີ່ມສຶກສາເຖິງການໃຫ້ຜູ້ຮຽນ ຮຽນເປັນກຸ່ມໂດຍຍຶດຖືຫຼັກການວ່າຖ້າຫາກວ່າການຮຽນ - ການສອນມີການຈັດການຢ່າງຖືກຕ້ອງ ແລະ ມີການຮ່ວມແຮງລວມທັງໃຫ້ມີການຮັບຜິດຊອບ ແລະ ຊ່ວຍກັນພາຍໃນກຸ່ມຈະເຮັດໃຫ້ການຮຽນດີຂຶ້ນ ຜູ້ຮຽນສາມາດຮຽນຮູ້ໄດ້ຫຼາຍກວ່າການຮຽນປົກກະຕິ ແລະ ເປັນວິທີການທີ່ໄດ້ຜົນທາງສັງຄົມໂດຍສະເພາະມະນຸດສຳພັນລະຫວ່າງບຸກຄົນທີ່ຮຽນອ່ອນກັບຄົນອື່ນໆໃນຫ້ອງຮຽນ. ໃນການແກ້ໄຂບັນ ຫາຕ່າງໆກໍຕ້ອງມີການຮ່ວມມືສະແດງຄວາມຄິດເຫັນ, ການສະໜັບສະໜູນເຊິ່ງກັນ ແລະ ກັນ ເພື່ອໃຫ້ເກີດຜົນສຳເລັດທີ່ດີ ແລະ ເທັກນິກການຈັດການຮຽນ - ການສອນແບບ Team Assisted Individualization (TAI) ຈະສາມາດ ນຳໄປໃຊ້ກັບສະຖານະການຕ່າງໆໄດ້. ດັ່ງນັ້ນ, ສາມາດເວົ້າໄດ້ວ່າ: ການສອນໂດຍນຳໃຊ້ເທັກນິກແບບ TAI ຄືວິທີການສອນທີ່ປະສົມປະສານລະຫວ່າງການຮຽນແບບຮ່ວມມື (Cooperative Learning) ແລະ ການສອນລາຍບຸກ ຄົນ (Individualization Instruction) ເຂົ້າກັນໂດຍໃຫ້ຜູ້ຮຽນໄດ້ລົງມືປະຕິບັດກິດຈະກຳໃນການຮຽນດ້ວຍຕົນເອງ

ຕາມຄວາມສາມາດຂອງຕົນ ແລະ ສົ່ງເສີມຄວາມຮ່ວມມື ກັນພາຍໃນກຸ່ມ, ມີການແລກປ່ຽນປະສົບການໃນການຮຽນ ແລະ ຄວາມສຳພັນກັນທາງສັງຄົມ.

ສາລະວິນ (Salavin, 1984) ກ່າວວ່າ: ການສອນເປັນວິທີໜຶ່ງທີ່ຈະນຳມາໃຊ້ເພື່ອແກ້ໄຂບັນຫາໃນການຮຽນ - ການສອນ ເພາະເທັກນິກການສອນແບບສະໜອງຄວາມແຕກຕ່າງລະຫວ່າງບຸກຄົນ ຊ່ວຍສົ່ງເສີມໃນການເຮັດວຽກເປັນກຸ່ມເທັກນິກການສອນທີ່ກ່າວມານີ້ຄື TAI (Team Assisted Individualization) ເຊິ່ງເປັນເທັກນິກທີ່ປະສົມປະສານລະຫວ່າງການຮຽນແບບຮ່ວມມື ແລະ ການສອນລາຍບຸກຄົນເຂົ້ານຳກັນ. ເທັກນິກການສອນແບບ TAI ນີ້ເນັ້ນການຮ່ວມມືພາຍໃນກຸ່ມໂດຍແຕ່ລະກຸ່ມຈະປະກອບດ້ວຍຜູ້ຮຽນເກັ່ງ, ປານກາງ ແລະ ອ່ອນຢູ່ຮ່ວມກັນ. ດັ່ງນັ້ນ, ຈຶ່ງເໝາະສົມແກ່ການນຳໃຊ້ເຂົ້າໃນການຮຽນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ເຊິ່ງຮູບແບບການຮຽນວິຊາພາສາລາວ ກ່ຽວກັບການແປງອັກສອນນັ້ນແມ່ນມີຄວາມສັບສົນພໍສົມຄວນເຊິ່ງຜູ້ຮຽນຈະຕ້ອງອາໄສການແນະນຳ ແລະ ຊອກຮູ້ສະແຫວງຫາເພີ່ມຕື່ມຈຶ່ງຈະສາ ມາດເຂົ້າໃຈຢ່າງລະອຽດ ແລະ ລວມມີຫຼັກການໃນການດັດແປງອັກສອນຢູ່ 4 ຢ່າງຄື: ແປງສະຫຼະ, ແປງພະຍັນຊະນະ, ແປງສຽງ ແລະ ແປງຄຳ.

ຈາກເຫດຜົນທີ່ກ່າວມາຂ້າງເທິງນີ້ຜູ້ຄົ້ນຄວ້າຈຶ່ງສົນໃຈທີ່ຈະນຳໃຊ້ເທັກນິກການສອນແບບ TAI ເຂົ້າໃນການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ຊັ້ນ ປີ 3 ເລື່ອງການແປງອັກສອນ ແລະ ແປງຄຳ ທີ່ສາຂາຄູພາສາລາວ - ວັນນະຄະດີ ພາກວິຊາຄູພາສາ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2020 - 2021. ໂດຍມີຈຸດປະສົງ ເພື່ອປຽບທຽບຜົນການຮຽນກ່ອນ ແລະ ຫຼັງການຈັດກິດຈະກຳການຮຽນ - ການສອນ ວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບຜູ້ຮຽນຊັ້ນປີ 3, ເພື່ອສຶກສາລະດັບຄວາມເພິ່ງພໍໃຈຂອງຜູ້ຮຽນຊັ້ນປີ 3 ທີ່ມີຕໍ່ການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TA. ເນື່ອງຈາກວ່າເປັນການພັດທະນາຜູ້ຮຽນເຮັດໃຫ້ຜູ້ຮຽນເກີດມີຄວາມຮູ້ຄວາມເຂົ້າໃຈໃນວິຊາພາ ສາລາວ ສາມາດນຳຄວາມຮູ້ໄປນຳໃຊ້ໃນຊີວິດປະຈຳວັນ ແລະ ເຮັດໃຫ້ການຈັດກິດຈະກຳການຮຽນ - ການສອນພາສາລາວໄດ້ຮັບຜົນດີ, ມີປະສິດທິພາບ ແລະ ປະສິດທິຜົນສູງຂຶ້ນ.

## 2. ອຸປະກອນ ແລະ ວິທີການ

ການສຶກສາຜົນການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ Team Assisted Individualization (TAI) ສຳລັບຜູ້ຮຽນຊັ້ນປີ 3 ທີ່ສາຂາວິຊາຄູພາສາລາວ - ວັນນະຄະດີ ຄະນະສຶກສາສາດ ມະຫາວິທະຍາໄລສຸພານຸວົງ ສົກສຶກສາ 2020 - 2021 ຄັ້ງນີ້ເປັນການຄົ້ນຄວ້າແບບທົດລອງກັບກຸ່ມເປົ້າໝາຍທີ່ເປັນນັກສຶກສາ ຄະນະສຶກສາດ ມະຫາວິທະຍາໄລສຸພານຸວົງ ໂດຍກົງ. ດັ່ງນັ້ນ, ຜູ້ຄົ້ນຄວ້າໄດ້ມີວິທີການດຳເນີນການຄົ້ນຄວ້າດັ່ງນີ້:

### 2.1 ກຸ່ມເປົ້າໝາຍ

ກຸ່ມເປົ້າໝາຍທີ່ນຳຄົ້ນຄວ້າໃນຄັ້ງນີ້ແມ່ນນັກສຶກສາຊັ້ນປີ 3 ທີ່ສາຂາຄູພາສາລາວ - ວັນນະຄະດີ ພາກວິຊາຄູພາສາ ຄະນະສຶກສາສາດ ໃນພາກຮຽນທີ I ສົກຮຽນ 2020 - 2021 ມີຈຳນວນທັງໝົດ 16 ຄົນ, ຍິງ 8 ຄົນ.

### 2.2 ຮູບແບບການຄົ້ນຄວ້າ

ການຄົ້ນຄວ້າຄັ້ງນີ້ໃຊ້ແບບແຜນການຄົ້ນຄວ້າແບບມີກຸ່ມເປົ້າໝາຍ 1 ກຸ່ມ ແລະ ມີການທົດສອບກ່ອນ ແລະ ທົດສອບຫຼັງການເຮັດການທົດລອງຮູບແບບ (One Group Pretest - Posttest Design)

| ທົດສອບກ່ອນ (Pretest) | ກຸ່ມເປົ້າໝາຍ (Treatment) | ທົດສອບຫຼັງ (Posttest) |
|---|---|---|
| $O_1$ | X | $O_2$ |

- ❖ **ສັນຍະລັກທີ່ໃຊ້ໃນການອອກແບບການຄົ້ນຄວ້າ**

X ແທນ ກຸ່ມເປົ້າໝາຍ (Treatment)

$O_1$ ແທນ ການທົດສອບກ່ອນ (Pretest)

$O_2$ ແທນ ການທົດສອບຫຼັງ (Posttest)

### 2.3 ການເກັບຮວບຮວມຂໍ້ມູນ

ການເກັບກຳຂໍ້ມູນໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ນຳໃຊ້ເອກະສານຕ່າງໆທີ່ໄດ້ກະກຽມໄວ້ແລ້ວ ລົງເກັບກຳຂໍ້ມູນໃນ

ຊ່ວງເວລາລົງທົດລອງ ເຊິ່ງໄດ້ດຳເນີນໄປຕາມຂັ້ນຕອນດັ່ງນີ້:

1) ກະກຽມແຜນການສອນ, ແບບທົດສອບ ແລະ ແບບສອບຖາມ ໂດຍແບ່ງແບບທົດສອບ ແລະ ແບບສອບຖາມແມ່ນອີງຕາມຈຳນວນນັກສຶກສາຂອງກຸ່ມເປົ້າໝາຍຈຳນວນ 16 ຄົນ.

2) ເມື່ອໄດ້ຮັບອະນຸຍາດແລ້ວ ກ່ອນຈະດຳເນີນການຮຽນ - ການສອນຜູ້ຄົ້ນຄວ້າໄດ້ນຳແບບທົດສອບກ່ອນຮຽນໄປທົດສອບເພື່ອເພື່ອວັດລະດັບຄວາມຮູ້ຂອງນັກສຶກສາກ່ອນຮຽນ.

3) ຜູ້ສອນນຳເຂົ້າສູ່ບົດຮຽນ, ແນະນຳປະເດັ່ນ ແລະ ຈຸດປະສົງທີ່ສອນ ພ້ອມດ້ວຍສິ່ງທີ່ຈະຮຽນ.

4) ຈາກນັ້ນດຳເນີນການຈັດການຮຽນ - ການສອນຕາມແຜນການສອນທີ່ສ້າງໄວ້ ແລະ ໃນຊ່ວງໄລຍະທີ່ສອນທາງຜູ້ຄົ້ນຄວ້າໄດ້ດຳເນີນການທົດສອບຍ່ອຍກັບນັກສຶກສາໄປພ້ອມ.

5) ຈັດກຸ່ມນັກສຶກສາໂດຍແບ່ງກຸ່ມ ກຸ່ມລະ 4 ຄົນ ເຊິ່ງລວມມີ 4 ກຸ່ມ ແລະ ແຈກຢາຍກິດຈະກຳກຸ່ມໃຫ້ແຕ່ລະກຸ່ມ. ຜູ້ຄົ້ນປະເມີນພຶດຕິກຳກຸ່ມໄປພ້ອມ.

6) ໃນການດຳເນີນການຮຽນ - ການສອນ ໂດຍນຳໃຊ້ເທັກນິກການສອນແບບ TAI ຕາມແຜນການສອນທີ່ວາງໄວ້.

7) ຫຼັງຈາກສຳເລັດການຈັດການຮຽນ - ການສອນຜູ້ຄົ້ນຄວ້າໄດ້ນຳເອົາແບບທົດສອບຫຼັງໄປທົດສອບກັບນັກສຶກສາຊັ້ນປີທີ 3 ທີ່ເລືອກເປັນກຸ່ມເປົ້າໝາຍຈຳນວນ 16 ຄົນ

8) ຈາກນັ້ນນຳເອົາແບບສອບຖາມຄວາມເພິ່ງພໍໃຈຢາຍໃຫ້ນັກສຶກສາ ຜູ້ຄົ້ນຄວ້າແນະນຳການຕອບແບບສອບຖາມໃຫ້ນັກສຶກສາເຂົ້າໃຈລະອຽດໃນການຕອບແບບສອບຖາມ.

9) ເມື່ອນັກສຶກສາທຸກຄົນຕອບແບບສອບຖາມສຳເລັດແລ້ວ ຜູ້ຄົ້ນຄວ້າເກັບແບບສອບຖາມຄືນໄດ້ຄົບຕາມຈຳນວນທີ່ຢາຍໃຫ້ນັກຮຽນ.

10) ກວດສອບຄວາມເປັນລະບຽບຮຽບຮ້ອຍຂອງແບບທົດສອບ ແລະ ແບບສອບຖາມເພື່ອນຳຂໍ້ມູນໄປດຳເນີນການວິເຄາະໃນຂັ້ນຕໍ່ໄປ.

## 2.4 ການວິເຄາະຂໍ້ມູນ

ການວິເຄາະຂໍ້ມູນໃນຄັ້ງນີ້ ຜູ້ຄົ້ນຄວ້າໄດ້ປະຕິບັດຕາມຂັ້ນຕອນດັ່ງລຸ່ມນີ້:

1. ແບບທົດສອບກ່ອນຮຽນ ແລະ ຫຼັງຮຽນຜູ້ສຶກສາໄດ້ວິເຄາະຫາຄ່າສະເລ່ຍ ($\bar{X}$), ຄ່າຜັນປ່ຽນມາດຖານ ($S.D$) ແລະ ວິເຄາະຫາຄວາມແຕກຕ່າງລະຫວ່າງຜົນການຮຽນນຳໃຊ້ສູດ t - test ແບບ paired sample t – test, ໂດຍໃຫ້ຜົນການຮຽນຫຼັງການຈັດການຮຽນ - ການສອນສູງກວ່າກ່ອນຮຽນດ້ວຍລະດັບຄວາມເຊື່ອໝັ້ນ 0.05

2. ການວິເຄາະລະດັບຄວາມເພິ່ງພໍໃຈຂອງນັກສຶກສາທີ່ຮຽນໂດຍການນຳໃຊ້ເທັກນິກການສອນແບບ TAI ໂດຍນຳໃຊ້ຄ່າສະເລ່ຍ ( $\bar{X}$ ) ຄ່າຜັນປ່ຽນມາດຕະຖານ ( $S.D$ ) ແລ້ວອະທິບາຍຜົນໂດຍທຽບໃສ່ເກນ.

**ເກນທີ່ໃຊ້ໃນການປະເມີນ:**

ຄ່າສະເລ່ຍຢູ່ລະຫວ່າງ 4.51 - 5.00 ໝາຍເຖິງ ມີຄວາມເພິ່ງພໍໃຈຕໍ່ກັບການຮຽນຫຼາຍທີ່ສຸດ.

ຄ່າສະເລ່ຍຢູ່ລະຫວ່າງ 3.51 - 4.50 ໝາຍເຖິງ ມີຄວາມເພິ່ງພໍໃຈຕໍ່ກັບການຮຽນຫຼາຍ.

ຄ່າສະເລ່ຍຢູ່ລະຫວ່າງ 2.51 - 3.50 ໝາຍເຖິງ ມີຄວາມເພິ່ງພໍໃຈຕໍ່ກັບການຮຽນປານກາງ.

ຄ່າສະເລ່ຍຢູ່ລະຫວ່າງ 1.51 - 2.50 ໝາຍເຖິງ ມີຄວາມເພິ່ງພໍໃຈຕໍ່ກັບການຮຽນໜ້ອຍ.

ຄ່າສະເລ່ຍຢູ່ລະຫວ່າງ 1.00 - 1.50 ໝາຍເຖິງ ມີຄວາມເພິ່ງພໍໃຈຕໍ່ກັບການຮຽນໜ້ອຍທີ່ສຸດ.

# 3. ຜົນໄດ້ຮັບ

ການສຶກສາຜົນການຈັດກິດຈະກຳການຮຽນ - ການສອນ ວິຊາພາສາລາວ ເລື່ອງ “ ການແປງອັກສອນ ແລະ ແປງຄຳ ” ໂດຍນຳໃຊ້ເທັກນິກການສອນແບບ TAI (Team Assisted Individualization) ຄືວິທີການສອນທີ່ປະສົມປະສານລະຫວ່າງການຮຽນແບບຮ່ວມມື (Cooperative Learning) ແລະ ການສອນລາຍບຸກຄົນ (Individualization Instruction) ເຂົ້າກັນໂດຍໃຫ້ຜູ້ຮຽນໄດ້ລົງມືປະຕິບັດກິດຈະກຳໃນການຮຽນດ້ວຍຕົນເອງຕາມຄວາມສາມາດຂອງຕົນ ແລະ ສົ່ງເສີມຄວາມຮ່ວມມືກັນພາຍໃນກຸ່ມ, ມີການແລກປ່ຽນປະສົບການໃນການຮຽນ ແລະ ຄວາມສຳພັນກັນທາງສັງຄົມ ເຊິ່ງຜົນທີ່ໄດ້ຮັບມີດັ່ງນີ້:

## 3.1 ຜົນການຮຽນຫຼັງການຈັດກິດຈະກຳການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບຜູ້ຮຽນຊັ້ນປີ 3

ນັກສຶກສາມີຜົນການຮຽນຫຼັງສູງກວ່າຜົນການຮຽນກ່ອນການຈັດກິດຈະກຳການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້

ເທັກ ນິກການສອນແບບ TAI ດ້ວຍລະດັບຄວາມເຊື່ອໝັ້ນ 0.05 ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້.

**3.2 ຜົນຄວາມເພິ່ງພໍໃຈຂອງນັກສຶກສາກັບການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI**

ນັກສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ກັບການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້.

**4. ວິພາກຜົນ**

ຜ່ານການສຶກສາຜົນການຈັດກິດຈະກຳການຮຽນ - ການສອນ ວິຊາພາສາລາວ ເລື່ອງ “ ການແປງອັກ ສອນ ແລະ ແປງຄຳ ” ໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບນັກສຶກສາ ຊັ້ນປີ 3 ສາຂາຄູພາສາລາວ - ວັນນະຄະດີ ສົກສຶກສາ2020 - 2021 ເຫັນໄດ້ວ່າ: ເທັກນິກແບບ TAI (Team Assisted Individualization) ຄືວິທີການສອນທີ່ປະສົມປະສານລະຫວ່າງການຮຽນແບບຮ່ວມມື (Cooperative Learning) ແລະ ການສອນລາຍບຸກຄົນ (Individualization Instruction) ເຂົ້າກັນໂດຍໃຫ້ຜູ້ຮຽນໄດ້ລົງມືປະຕິບັດກິດຈະກຳໃນການຮຽນດ້ວຍຕົນເອງ ເຊິ່ງ ສາລະວິນ (Salavin, 1984) ກ່າວວ່າ: ເທັກນິກການສອນແບບ TAI ນີ້ ເນັ້ນການຮ່ວມມືພາຍໃນກຸ່ມ ໂດຍແຕ່ລະກຸ່ມຈະປະກອບດ້ວຍນັກຮຽນເກັ່ງ, ປານກາງ ແລະ ອ່ອນຢູ່ຮ່ວມກັນ. ຈາກການສຶກສາຄົ້ນຄວ້າ ຜົນການຈັດກິດຈະກຳການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI ສາມາດອະພິປາຍຜົນດັ່ງຕໍ່ໄປນີ້:

1) ຫຼັງການຮຽນສູງກວ່າກ່ອນຮຽນ ການຈັດການຮຽນການສອນໂດຍການນຳໃຊ້ວິທີສິດສອນແບບ TAI ມີຂັ້ນຕອນຢ່າງລະອຽດຕາມລຳດັບຂອງການພັດທະນາຄວາມຮູ້ຄວາມສາມາດຂອງຜູ້ຮຽນ, ຜູ້ຮຽນໄດ້ລົງມືປະຕິບັດຮຽນຮູ້ດ້ວຍຕົນເອງຢ່າງແທ້ຈິງ. ສະນັ້ນ, ຈຶ່ງເຮັດໃຫ້ຜູ້ຮຽນເກີດມີການຮຽນຮູ້ ແລະ ໃຫ້ຄວາມສົນໃຈຕໍ່ການຮຽນຫຼາຍຈຶ່ງເຮັດໃຫ້ຜູ້ຮຽນປະສົບຜົນສຳເລັດທາງການຮຽນ ວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍຜົນການຮຽນຫຼັງການນຳໃຊ້ເທັກນິກການສອນແບບ TAI ສູງກວ່າກ່ອນຮຽນ. ອີກປະການໜຶ່ງການຈັດການຮຽນ - ການສອນແບບ TAI ເປັນຫຼັກເປັນວິທີສອນທີ່ເອົາເຂົ້າມານຳໃຊ້ໃໝ່ໃນສະຖາບັນແຫ່ງນີ້. ສະນັ້ນ, ຈຶ່ງເຮັດໃຫ້ຜູ້ຮຽນມີຄວາມກະຕືລືລົ້ນສູງຕໍ່ກັບການຈັດການຮຽນ - ການສອນ ເພາະວ່າເປັນການນຳເອົາຮູບແບບວິທີສິດສອນແບບໃໝ່ທີ່ແຕກຕ່າງຈາກວິທີທີ່ຜູ້ຮຽນເຄີຍຮຽນມາຄື: ເປັນການຈັດການຮຽນ - ການສອນທີ່ເລີ່ມຕົ້ນດ້ວຍບັນຫາ ຫຼືສະຖານະການທີ່ເປັນຢູ່ຕາມສະພາບການຕົວຈິງ, ກະຕຸ້ນໃຫ້ຜູ້ຮຽນເກີດຄວາມສົນໃຈຢາກຮູ້ ແລະ ຕ້ອງການທີ່ຈະສະແຫວງຫາຄວາມຮູ້ດ້ວຍຕົນເອງຕາມຫຼັກຂະບວນການແກ້ບັນຫາຮ່ວມກັນໃນການເຮັດວຽກເປັນກຸ່ມໂດຍທີ່ຄູເປັນຜູ້ໃຫ້ຄຳແນະນຳຊ່ວຍເຫຼືອ ແລະ ສະໜັບສະໜູນໃນການຮຽນ ເພື່ອສ້າງໃຫ້ຜູ້ຮຽນເກີດມີແນວຄິດ, ມີປະສົບການໃນການຮຽນຮູ້ໃໝ່, ຮູ້ຈັກວິທີການແກ້ບັນຫາດ້ວຍຕົນເອງໄດ້, ເຊິ່ງມັນໄດ້ສອດຄ່ອງກັບງານວິໄຈຂອງ ສິຣິການຈະນາ ເບ້ຍທອງ ພ້ອມຄະນະ (2019) ສຶກສາຜົນສຳເລັດການຮຽນພາສາໄທເລື່ອງຄຳລາຊາສັບໂດຍໃຊ້ການຈັດການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ TAI ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ຜົນການວິໄຈພົບວ່າ: ຜົນສຳເລັດທາງການຮຽນວິຊາພາ ສາໄທ ເລື່ອງຄຳລາຊາສັບໂດຍໃຊ້ການຈັດການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ TAI ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ມີຄ່າສະເລ່ຍກ່ອນຮຽນ ແລະ ຫຼັງຮຽນເທົ່າກັບ 10.41/17.41 ຄະແນນໂດຍຜົນສຳເລັດທາງການຮຽນຫຼັງຮຽນສູງກວ່າກ່ອນຮຽນ ດ້ວຍລະດັບຄວາມສຳຄັນ 0.05 ແລະ ສອດຄ່ອງກັບ ນາດນາລີ ອິນທະສອນ (2550) ການປຽບທຽບຜົນສຳເລັດທາງການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ກັບການສອນແບບປົກກະຕິ ຜົນການວິໄຈພົບວ່າ: ຜົນສຳເລັດທາງການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ແລະ ນັກຮຽນກຸ່ມທີ່ໄດ້ຮັບການສອນແບບປົກກະຕິ ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01 ໂດຍກຸ່ມທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ມີຜົນສຳເລັດສູງກວ່າກຸ່ມທີ່ສອນແບບປົກກະຕິ, ຜົນສຳເລັດທາງການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ກ່ອນ ແລະ ຫຼັງຮຽນ ມີຄວາມແຕກຕ່າງກັນດ້ວຍລະດັບຄວາມສຳຄັນທາງສະຖິຕິ 0.01, ໂດຍຜົນການຮຽນ ຫຼັງ ສູງກວ່າ ກ່ອນການຮຽນ.

2) ຈາກການວິເຄາະຄວາມເພິ່ງພໍໃຈຂອງຜູ້ຮຽນໃນຄັ້ງນີ້ພົບວ່າ: ຜູ້ຮຽນມີຄວາມເພິ່ງພໍໃຈຫຼາຍຕໍ່ກັບການຈັດກິດຈະກຳການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI ໝາຍຄວາມວ່າເທັກນິກການສອນແບບ TAI ດັ່ງກ່າວນີ້ເປັນການຈັດກິດຈະກຳການຮຽນ - ການສອນທີ່ຈັດຜູ້ຮຽນເປັນກຸ່ມ, ກຸ່ມລະ 4 ຄົນ ເຊິ່ງປະກອບດ້ວຍຜູ້ຮຽນເກັ່ງ 1 ຄົນ, ປານກາງ 2 ຄົນ ແລະ ອ່ອນ 1 ຄົນ ເຊິ່ງສະມາຊິກແຕ່ລະກຸ່ມມີການແລກປ່ຽນຄວາມຮູ້ອະທິບາຍຄວາມຮູ້ໃຫ້ສະມາຊິກຟັງ ມີຄວາມຮັບຜິດຊອບຕໍ່ຕົນເອງ ແລະ ມີການຊ່ວຍເຫຼືອກັນໃນກຸ່ມ ມີການຍອມຮັບເຫັນຄວາມສຳຄັນຂອງໝູ່ເພື່ອນຫຼາຍຂຶ້ນ ບັນຍາກາດໃນການເຮັດກິດຈະກຳກຸ່ມມີຄວາມສະໜຸກສະໜານ ເທັກນິກການສອນແບບ TAI ເປັນວິທີການຮຽນຮູ້ທີ່ເໝາະສົມ ເຊິ່ງເປັນການຈັດການຮຽນຮູ້ທີ່ສະໜອງຄວາມແຕກຕ່າງລະຫວ່າງບຸກຄົນ ແລະ ການເຮັດວຽກກຸ່ມເຊິ່ງຊ່ວຍໃຫ້ຜູ້ຮຽນພັດທະນາທັກສະທາງສັງຄົມ ຮູ້ຈັກການຊ່ວຍເຫຼືອເຊິ່ງກັນ ແລະ ກັນໃນກຸ່ມຂອງຜູ້ຮຽນ ເຮັດໃຫ້ຜູ້ຮຽນມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ກັບການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້, ເຊິ່ງສອດຄ່ອງກັບງານວິໄຈຂອງ ສິຣິການຈະນາ ເບ້ຍທອງ ພ້ອມຄະນະ (2019) ສຶກສາຜົນສຳເລັດການຮຽນພາສາໄທເລື່ອງຄຳລາຊາສັບໂດຍໃຊ້ການຈັດການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ TAI ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ເຈຕະຄະຕິຂອງນັກຮຽນທີ່ມີຕໍ່ການຈັດການຮຽນ - ການສອນເລື່ອງຄຳລາຊາສັບໂດຍໃຊ້ການຈັດການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ TAI ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ມີຄ່າສະເລ່ຍເທົ່າກັບ 4.67 ຄ່າ S.D = 0.21 ມີຄວາມເພິ່ງພໍໃຈຢູ່ໃນລະດັບຫຼາຍທີ່ສຸດ ແລະ ສອດຄ່ອງກັບງານວິໄຈຂອງ ນາດນາລີ ອິນທະສອນ (2550) ການປຽບທຽບຜົນສຳເລັດທາງການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ກັບການສອນແບບປົກກະຕິ ຜົນການວິໄຈພົບວ່າ: ຜົນຂອງການຕອບແບບສອບຖາມຄວາມຄິດເຫັນຂອງນັກຮຽນທີ່ມີຕໍ່ ການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ກັບການສອນແບບປົກກະຕິ ພົບວ່າ: ນັກຮຽນມີຄວາມຄິດເຫັນທີ່ດີຕໍ່ການຮຽນການສອນແບບຮ່ວມມື ເທັກນິກ TAI.

## 5. ສະຫຼຸບ

ຈາກການສຶກສາວິໄຈກ່ຽວກັບການຈັດກິດຈະກຳການຮຽນ ການສອນໂດຍໃຊ້ເທັກນິກການສອນແບບ TAI. ສາມາດສະຫຼຸບໄດ້ວ່າ: ນັກສຶກສາມີຜົນການຮຽນຫຼັງສູງກວ່າຜົນການຮຽນກ່ອນການຈັດການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ດ້ວຍລະດັບຄວາມເຊື່ອໝັ້ນ 0.05 ແມ່ນເປັນໄປຕາມສົມມຸດຖານທີ່ໄດ້ຕັ້ງໄວ້, ນັກສຶກສາມີຄວາມເພິ່ງພໍໃຈຫຼາຍທີ່ສຸດຕໍ່ກັບການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ເຊິ່ງເປັນໄປຕາມສົມມຸດຖານທີ່ຕັ້ງໄວ້ ເນື່ອງຈາກວ່າ ການຈັດການຮຽນ ການສອນໂດຍໃຊ້ເທັກນິກການສອນແບບ TAI. ເປັນການຈັດການຮຽນການສອນທີ່ເຮັດໃຫ້ຜູ້ຮຽນໄດ້ກາຍເປັນສ່ວນໜຶ່ງໃນການມີສ່ວນຮ່ວມໃນກິດຈະກຳການຮຽນ ແລະ ເປັນຜູ້ທີ່ມີຄວາມພ້ອມໃນເລື່ອງການຮອບຮູ້, ເຂົ້າໃຈໃນເນື້ອໃນຫຼາຍທີ່ສຸດເຊິ່ງກາຍເປັນຜົນເນື່ອງໃຫ້ຜູ້ຮຽນໄດ້ມີຜົນການຮຽນໃນລະດັບດີ ຜູ້ຮຽນໄດ້ຮຽນຮູ້ດ້ວຍການລົງມືປະຕິບັດຈິງເກີດຄວາມສົນໃຈ, ມີຄວາມຕື່ນຕົວ ແລະ ມີຄວາມສຸກກັບການການຮຽນ ເຊິ່ງກໍ່ໃຫ້ເກີດຄວາມສາມາດ, ຄວາມຄິດ ແລະ ສະຕິປັນຍາ. ກະຕຸ້ນໃຫ້ຜູ້ຮຽນໄດ້ໃຊ້ຄວາມຄິດຢ່າງເຕັມທີ່ໃນການຮຽນ ແລະ ຊ່ວຍໃຫ້ຜູ້ຮຽນມີໂອກາດສ້າງປະຕິສຳພັນກັບໝູ່ເພື່ອນ, ຄູອາຈານ ແລະ ສະພາບແວດລ້ອມອ້ອມຕົວຕະຫຼອດຈົນສາມາດສ້າງອົງຄວາມຮູ້ໄດ້ດ້ວຍຕົນເອງນຳເອົາຄວາມຮູ້ທີ່ໄດ້ຮຽນມາໄປປະຍຸກໃຊ້ໃນຊີວິດຕົວຈິງໄດ້.

## 6. ຂໍ້ຂັດແຍ່ງ

ພວກຂ້າພະເຈົ້າ ທີມງານນັກຄົ້ນຄວ້າ ຂໍປະຕິຍານຕົນວ່າ ຂໍ້ມູນທັງໝົດທີ່ມີໃນບົດຄວາມວິຊາການດັ່ງກ່າວນີ້ແມ່ນບໍ່ມີຜົນປະໂຫຍດແອບແຝງໃດໆ ກັບອົງກອນສະເໜີທຶນ.

## 7. ເອກະສານອ້າງອີງ

ກົງຄຳ ແສນສຸກ ແລະ ຄະນະ. (2005). ສຶກສາສາດທົ່ວໄປສຳລັບຄະນະສຶກສາສາດ ມະຫາວິທະຍາໄລແຫ່ງຊາດ ນະຄອນຫຼວງວຽງຈັນ

ຄຳເມິງ ດວງທອງລາ ພ້ອມດວ້ຍຄະນະ. (2009). ກະຊວງສຶກສາທິກ, ກົມສ້າງຄູ, ພາສາລາວ 2 ລະບົບ 11+3.

ສີວຽງແຂກ ກອນນີວົງ ພ້ອມດວ້ຍຄະນະ. (2010). ວັດຈະນານຸກົມພາສາລາວ (ລາວແປລາວ) ສະບັບປັບປຸງໃໝ່ພິມຄັ້ງທີ 2ສຳນັກພິມ ແລະ ຈຳໜ່າຍປື້ມແຫ່ງລັດ ສປປ ລາວ ນະຄອນຫຼວງວຽງຈັນ.

ສີຣິການຈະນາ ເບ້ຍທອງ ພ້ອມຄະນະ. (2019). ສຶກສາຜົນສຳເລັດການຮຽນພາສາໄທເລື່ອງຄຳລາຊາສັບໂດຍໃຊ້ການຈັດ ການຮຽນຮູ້ແບບກຸ່ມຮ່ວມມືເທັກນິກ TAI ຂອງນັກຮຽນຊັ້ນປະຖົມສຶກສາ ປີທີ 5 ວິທະຍານິພົນ ໂປຼແກຼມ ວິຊາການປະຖົມສຶກສາ, ຄະນະຄຸຣຸສາດ ມະຫາວິທະຍາໄລລາຊະພັດກຳແພງເພັດ.

ສຸລິນທອນ ສີດາພອນ ແລະ ຄຳຊາຍ ຈັນທະທີງ. (2016). ວິທີສິດສອນພາສາລາວ - ວັນນະຄະດີ ສຳລັບນັກສຶກສາປີ 3 ຄະນະສຶກສາສາດ ມະຫາວິທະຍາ ໄລສຸພານຸວົງ.

ສູນພັດທະນາຄູ. (1998). ພາສາລາວ1 ສຳລັບສ້າງຄູລະບົບ 11+3 ປີທີ 1 ໂຮງພິມກະຊວງສຶກສາທິການ ແລະ ກິລາ.

ສູນພັດທະນາຄູ. (2009). ພາສາລາວ2 ສຳລັບສ້າງຄູລະບົບ 11+3 ປີທີ 2 ໂຮງພິມ ກະຊວງສຶກສາທິການ ແລະ ກິລາ.

ສູນພັດທະນາຄູ. (2009). ພາສາລາວ 3 ສຳລັບສ້າງຄູລະບົບ 11+3 ປີທີ 2 ໂຮງພິມ ກະຊວງສຶກສາທິການ ແລະ ກິລາ.

ແສງຟ້າ ໂທລານຸພາບ. (2005). ພາສາລາວນຳໃຊ້ ຄະນະອັກສອນສາດ ພາກວິຊາພາສາລາວ - ສື່ມວນຊົນ ມະຫາ ວິທະຍາໄລແຫ່ງຊາດ.

ຖະປະນີ ນາຄອນຊັບ ພ້ອມດວ້ຍຄະນະ. (2004: 73-88). ພາສາໄທ ມ.1 ແລະ ມ.2 ພິມຄັ້ງທີ 1, ຈັດພິມໂດຍບໍລິສັດ ອັກສອນຈະເລີນທັດ ອຈທ ພສ 2546.

ນາດນາລີ ອິນທະສອນ. (2550). ການປຽບທຽບຜົນສຳເລັດທາງການຮຽນວິຊາພາສາໄທ ເລື່ອງຄຳ ແລະ ຊະນິດຂອງຄຳຂອງນັກຮຽນຊັ້ນປະຖົມສຶກສາປີທີ 6 ທີ່ໄດ້ຮັບການສອນໂດຍການຮຽນແບບຮ່ວມມືເທັກນິກ TAI ກັບການສອນແບບປົກະຕິ, ວິທະຍານິພົນ ສຶກສາສາດມະຫາບັນດິດ ສາຂາວິຊາການສອນພາສາໄທ, ບັນດິດວິທະຍາໄລ ມະຫາວິທະຍາໄລສີລະປາກອນ.

ບຸນຍໍ ພິມມະບຸດ ພ້ອມຄະນະ. (2011). ແບບຮຽນພາສາລາວຊັ້ນມັດທະຍົມ ປີທີ 2 ກະຊວງສຶກສາທິການ ແລະ ກິລາ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ

ປົງຄຳ ສີສຸວັນ ພ້ອມຄະນະ. (2000). ໄວຍາກອນລາວປັດຈຸບັນ. ກະຊວງສຶກສາທິການສະຖາບັນຄົ້ນຄວ້າວິທະຍາສາດການສຶກສາແຫ່ງຊາດ.

ພູມີ ວົງວິຈິດ. (1991: 41). ໄວຍາກອນລາວ, ພິມເທື່ອທີ 2 ຈັດພິມໂດຍ ຫ້ອງການສູນກາງແນວລາວຮັກຊາດ.

ສີລາ ວິລະວົງ. (1952). ໄວຍາກອນລາວ, ພາກທີ 2 ວາຈີວິພາກຂອງລາຊະບັນດິດສະພາ ກະຊວງສຶກສາທິການ.

ພອນສີຣິ ອຸໄທວັນ ພ້ອມດວ້ມຄະນະ. (2011). ແບບຮຽນພາສາລາວຊັ້ນມັດທະຍົມ ປີທີ 2, ກະຊວງສຶກສາທິການ ສະຖາບັນຄົ້ນຄວ້າວິທະຍາສາດການສຶກສາ.

ອ່ອນແກ້ວ ນວນນະວົງ.(2014). ແບບຮຽນພາສາລາວຊັ້ນມັດທະຍົມ ປີທີ 5 ກະຊວງສຶກສາທິການ ແລະ ກິລາ.

ອຳມາລາ ປະສິດລັດສິນ. (2456). ປື້ມໄວຍາກອນພາສາອັງກິດ; ປື້ມຊະນິດຂອງຄຳໃນພາສາໄທ.

ຕາຕະລາງທີ 1: ຜົນການຮຽນຫຼັງການຈັດກິດຈະກຳການຮຽນ - ການສອນວິຊາ ພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳໂດຍນຳໃຊ້ເທັກນິກການສອນແບບ TAI ສຳລັບຜູ້ຮຽນຊັ້ນປີ 3

| ຜົນການຮຽນ | ຄະແນນລວມ | ກຸ່ມຕົວຢ່າງ | ຄະແນນສະເລ່ຍ | ຄ່າຜັນປ່ຽນມາດຕະຖານ | ສະຖິຕິທົດສອບ | ການປຽບທຽບສົມມຸດຖານ |
|---|---|---|---|---|---|---|
| ກ່ອນຮຽນ | 246 | 16 | 15.38 | 2.27 | 4.58 | 0.00 |
| ຫຼັງຮຽນ | 291 | 16 | 18.19 | 1.72 | | |

ຕາຕະລາງທີ 2: ຜົນການຄວາມເພິ່ງພໍໃຈຂອງຜູ້ຮຽນຕໍ່ກັບການຈັດກິດຈະກຳການຮຽນ - ການສອນວິຊາພາສາລາວ ເລື່ອງການແປງອັກສອນ ແລະ ແປງຄຳ ໂດຍນຳໃຊ້ເທັກນິກການສອນແບບ TAI

| ລ/ດ | ເນື້ອໃນການປະເມີນ | ຄວາມເພິ່ງພໍໃຈ | | |
|---|---|---|---|---|
| | | $\overline{X}$ | SD | ແປຄວາມໝາຍ |
| I | ດ້ານເນື້ອໃນບົດຮຽນ | | | |
| 1 | ເນື້ອໃນທີ່ນຳມາສອນມີຄວາມຊັດເຈນ | 4.75 | 0.45 | ພໍໃຈຫຼາຍທີ່ສຸດ |
| 2 | ເນື້ອໃນທີ່ນຳມາສອນມີປະໂຫຍດຄວນສຶກສາຮ່ຳຮຽນ | 4.69 | 0.48 | ພໍໃຈຫຼາຍທີ່ສຸດ |
| 3 | ເນື້ອໃນທີ່ນຳມາສອນມີການລຽນລຳດັບຢ່າງເໝາະສົມ | 4.63 | 0.5 | ພໍໃຈຫຼາຍທີ່ສຸດ |
| 4 | ເນື້ອໃນທີ່ນຳມາສອນມີຄວາມສອດຄ່ອງກັບຄວາມຮູ້ພື້ນຖານຂອງຜູ້ຮຽນ | 4.63 | 0.5 | ພໍໃຈຫຼາຍທີ່ສຸດ |
| 5 | ເນື້ອໃນທີ່ນຳມາສອນມີຄວາມເໝາະສົມກັບເວລາ | 4.13 | 0.62 | ພໍໃຈຫຼາຍ |
| | ສະເລ່ຍລວມ | 4.56 | 0.55 | ພໍໃຈຫຼາຍທີ່ສຸດ |
| II | ດ້ານວິທີສິດສອນ | | | |
| 1 | ການຈັດການຮຽນ - ການສອນດ້ວຍເທັກນິກ TAI ສາມາດສ້າງໃຫ້ຜູ້ຮຽນມີຄວາມເຂົ້າໃຈຕໍ່ບົດຮຽນຫຼາຍ | 4.38 | 0.62 | ພໍໃຈຫຼາຍ |
| 2 | ເທັກນິກການສອນແບບ TAI ເຮັດໃຫ້ຜູ້ຮຽນມີສ່ວນຮ່ວມໃນການປະກອບຄຳຄິດຄຳເຫັນ | 4.69 | 0.48 | ພໍໃຈຫຼາຍທີ່ສຸດ |
| 3 | ການໃຊ້ເທັກນິກແບບ TAI ສ້າງໃຫ້ຜູ້ຮຽນກ້າສະແດງອອກ | 4.38 | 0.62 | ພໍໃຈຫຼາຍ |
| 4 | ເທັກນິກ TAI ເຮັດໃຫ້ຜູ້ຮຽນໄດ້ສ້າງຜົນງານດ້ວຍຕົນເອງ | 4.38 | 0.5 | ພໍໃຈຫຼາຍ |
| 5 | ວິທີສິດສອນທີ່ນຳມາໃຊ້ສາມາດຮັບປະກັນດ້ານຄວາມຮູ້, ຄວາມຄິດ ແລະ ຄວມສາມາດ | 4.31 | 0.7 | ພໍໃຈຫຼາຍ |
| | ສະເລ່ຍລວມ | 4.43 | 0.59 | ພໍໃຈຫຼາຍ |
| III | ດ້ານກິດຈະກຳການຮຽນ - ການສອນ | | | |
| 1 | ກິດຈະກຳທີ່ມອບໃຫ້ຜູ້ຮຽນປະຕິບັດມີຄວາມເໝາະສົມກັບເວລາ | 3.94 | 0.68 | ພໍໃຈຫຼາຍ |
| 2 | ການເຮັດກິດຈະກຳເທັກນິກແບບ TAI ຊ່ວຍໃຫ້ມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ | 4.5 | 0.52 | ພໍໃຈຫຼາຍ |
| 3 | ການຮຽນແບບ TAI ເຮັດໃຫ້ພວກນ້ອງມີສ່ວນຮ່ວມໃນການວາງແຜນເຮັດວຽກເປັນກຸ່ມກັບໝູ່ເພື່ອນ | 4.56 | 0.51 | ພໍໃຈຫຼາຍທີ່ສຸດ |
| 4 | ພວກນ້ອງມັກຮຽນວິຊາພາສາລາວ ໂດຍໃຊ້ເທັກນິກການສອນແບບ TAI | 4.44 | 0.63 | ພໍໃຈຫຼາຍ |
| 5 | ການປະຕິບັດກິດຈະກຳມີຄວາມສະດວກ ແລະ ເຂົ້າໃຈງ່າຍ | 4.13 | 0.72 | ພໍໃຈຫຼາຍ |
| | ສະເລ່ຍລວມ | 4.31 | 0.56 | ພໍໃຈຫຼາຍ |
| IV | ດ້ານສະພາບແວດລ້ອມ | | | |
| 1 | ການຮຽນພາສາລາວໂດຍຈັດກິດຈະກຳກຸ່ມຊ່ວຍເຮັດໃຫ້ເກີດການຮຽນຮູ້ໄດ້ດີກວ່າຮຽນເປັນບຸກຄົນ | 4.31 | 0.7 | ພໍໃຈຫຼາຍ |
| 2 | ກິດຈະກຳການຮຽນແບບ TAI ຊ່ວຍໃຫ້ຜູ້ຮຽນມີຄວາມສາມັກຄີກັນເກີດການຮຽນຮູ້ເຊິ່ງກັນ ແລະ ກັນ | 4.69 | 0.48 | ພໍໃຈຫຼາຍທີ່ສຸດ |

| | | | | |
|---|---|---|---|---|
| 3 | ເທັກນິກການສອນແບບ TAI ເຮັດໃຫ້ພວກນ້ອງໄດ້ ສະ ແຫວງຫາຄວາມຮູ້ດ້ວຍຕົນເອງ | 4.5 | 0.52 | ພໍໃຈຫຼາຍ |
| 4 | ການຮຽນແບບ TAI ເຮັດໃຫ້ພວກນ້ອງມີການແລກປ່ຽນຄວາມຮູ້ ແລະ ປະສົບການໃໝ່ໆພາຍໃນກຸ່ມ | 4.5 | 0.52 | ພໍໃຈຫຼາຍ |
| 5 | ການຮຽນແບບ TAI ເຮັດໃຫ້ພວກນ້ອງມີສ່ວນຮ່ວມກິດຈະກຳໄດ້ດີຂຶ້ນ | 4.56 | 0.51 | ພໍໃຈຫຼາຍທີ່ສຸດ |
| | ສະເລ່ຍລວມ | 4.51 | 0.55 | ພໍໃຈຫຼາຍທີ່ສຸດ |
| V | ດ້ານການວັດ ແລະ ປະເມີນຜົນ | | | |
| 1 | ການປະເມີນມີຄວາມສອດຄ່ອງກັບໄວການຮັບຮູ້ຂອງຜູ້ຮຽນ | 4.31 | 0.60 | ພໍໃຈຫຼາຍ |
| 2 | ການປະເມີນມີການໃຊ້ເກນກຳນົດຢ່າງເໝາະສົມ | 4.25 | 0.68 | ພໍໃຈຫຼາຍ |
| 3 | ການປະເມີນຜົນຂອງຄູມີຄວາມຫຼາກຫຼາຍ | 4.31 | 0.60 | ພໍໃຈຫຼາຍ |
| 4 | ພວກນ້ອງມີຄວາມເພິ່ງພໍໃຈໜ້ອຍ - ຫຼາຍປານໃດໃນການປະເມີນຜົນຂອງຄູ | 4.56 | 0.51 | ພໍໃຈຫຼາຍທີ່ສຸດ |
| 5 | ຫຼັງຈາກການປະຕິບັດກິດຈະກຳແຕ່ລະຄັ້ງຄູໄດ້ແຈ້ງຜົນງານໃຫ້ຜູ້ຮຽນຮັບຮູ້ທຸກຄັ້ງ | 4.31 | 0.70 | ພໍໃຈຫຼາຍ |
| | ສະເລ່ຍລວມ | 4.35 | 0.62 | ພໍໃຈຫຼາຍ |
| VI | ດ້ານການນຳໄປໃຊ້ | | | |
| 1 | ສາມາດເຂົ້າໃຈຂອງການແປງອັກສອນ ແລະ ແປງຄຳ | 4.69 | 0.48 | ພໍໃຈຫຼາຍທີ່ສຸດ |
| 2 | ສາມາດແປງອັກສອນ ແລະ ແປງຄຳໄດ້ | 4.19 | 0.66 | ພໍໃຈຫຼາຍ |
| 3 | ສາມາດນຳເອົາຄວາມຮູ້ໄປໃຊ້ໃນຊີວິດປະຈຳວັນໄດ້ | 4.31 | 0.6 | ພໍໃຈຫຼາຍ |
| 4 | ສາມາດໃຫເຄົາປຶກສາແກ່ໝູ່ເພື່ອນທີ່ຮຽນດ້ວຍກັນໄດ້ | 4.25 | 0.58 | ພໍໃຈຫຼາຍ |
| 5 | ສາມາດນຳເອົາຄວາມຮູ້ໄປເຜີຍແຜ່ ຫຼື ຖ່າຍທອດໃຫ້ໝູ່ໄດ້ | 4.31 | 0.6 | ພໍໃຈຫຼາຍ |
| | ສະເລ່ຍລວມ | 4.35 | 0.60 | ພໍໃຈຫຼາຍ |

| | ສະຫຼຸບລວມໃນແຕ່ລະດ້ານ | | | |
|---|---|---|---|---|
| I | ດ້ານເນື້ອໃນບົດຮຽນ | 4.56 | 0.55 | ພໍໃຈຫຼາຍທີ່ສຸດ |
| II | ດ້ານວິທີສິດສອນ | 4.43 | 0.59 | ພໍໃຈຫຼາຍ |
| III | ດ້ານກິດຈະກຳການຮຽນ - ການສອນ | 4.31 | 0.56 | ພໍໃຈຫຼາຍ |
| IV | ດ້ານສະພາບແວດລ້ອມ | 4.51 | 0.55 | ພໍໃຈຫຼາຍທີ່ສຸດ |
| V | ດ້ານການວັດ ແລະ ປະເມີນຜົນ | 4.35 | 0.62 | ພໍໃຈຫຼາຍ |
| VI | ດ້ານການນຳໄປໃຊ້ | 4.35 | 0.60 | ພໍໃຈຫຼາຍ |
| | ສະເລ່ຍລວມແຕ່ລະດ້ານ | 4.55 | 0.61 | ພໍໃຈຫຼາຍທີ່ສຸດ |